

# ໝົດຄວາມຫວັງແລ້ວຫຼື



F472

# ໝົດຄວາມຫວັງແລ້ວຫຼື

# Is There No Hope?

## Laotian Edition

Copyright 2015 Voice Media

info@VM1.global
Web home: www.VM1.global

All rights reserved. No part of the publication may be reproduced, distributed or transmitted in any form or by any means, including photocopying, recording, or other electronic, or mechanical methods, without the prior written permission of the publisher, except in the case of brief quotations embodied in critical reviews and certain other noncommercial uses permitted by copyright law. For permission requests, email the publisher, addressed "Attention: Permission Coordinator," at the address above.

This publication **may not be sold, and is for free distribution** only.

# ຫມົດຄວາມຫວັງແລ້ວຫລື ?

ຫນັງສືສະບັບນີ້ ໄດ້ແຕ່ງຂຶ້ນສຳລັບເພື່ອນພີ່ນ້ອງຊາວລາວ ຊຶ່ງໄດ້ອົພຍົກຫລົບໄພ ທີ່ໄດ້ມາອາສັຍຢູ່ໃນປະເທດຝັ່ງເສດ. ກ່ອນອື່ນ ຂ້າພະເຈົ້າຂໍສແດງຄວາມເຫັນອົກເຫັນໃຈໂດຍຄວາມເປັນຫ່ວງເປັນໃຍນຳພວກທ່ານ ຊຶ່ງກຳລັງໄດ້ພົບກັບຄວາມຫຍຸ້ງຍາກລຳບາກບາງປະການ ເນື່ອງຈາກວ່າພວກທ່ານໄດ້ປົບໜີຈາກບ້ານເກີດເມືອງນອນຂອງຕົນ ດ້ວຍຄວາມຈຳເປັນ. ຂ້າພະເຈົ້າຮູ້ສຶກມີຄວາມເສັຽໃຈດ້ວຍວ່າຂ້າພະເຈົ້າເຄີຍໄດ້ອາໃສຢູ່ເມືອງລາວມາແລ້ວປະມານ ໒໖ ປີຄືຕັ້ງແຕ່ປີ ໑໙໔໙ ເຖິງປີ ໑໙໗໕. ຂ້າພະເຈົ້າຄິດວ່າຂ້າພະເຈົ້າອາຈບໍ່ມີຫວັງ ຈະໄດ້ກັບຄືນເມືອເຫັນເມືອງລາວໄດ້ອີກ ແລະກໍເຄີຍນັບຖືປະຊາຊົນຊາວລາວ ເປັນສະເຫມືອນຍາຕພີ່ນ້ອງທີ່ຮັກແພງກັນ ສະນັ້ນ ເຖິງວ່າຂ້າພະເຈົ້າເມືອເມືອງລາວບໍ່ໄດ້ກໍຕາມ ຂ້າພະເຈົ້າຍິນດີທີ່ຈະມີໂອກາດໄດ້ພົບປະສັງສັນກັນອີກກັບເພື່ອນພີ່ນ້ອງຊາວລາວ ທີ່ປະເທດຝັ່ງເສດນີ້. ເຫດການຕ່າງໆຊຶ່ງໄດ້ບັງເກີດຂຶ້ນແກ່ທ່ານແລ້ວນັ້ນອາຈພາໃຫ້ທ່ານເສັຍຄວາມຫວັງຢ່າງເຕັມທີ່ ເຊັ່ນວ່າ :

## ໑. ເມື່ອກ່ອນທ່ານຫວັງວ່າປະເທດຊາຕລາວຍັງຈະໄດ້ຮັບຄວາມສະງົບສຸກ

ຕັ້ງແຕ່ໄດ້ຫລາຍປີມາແລ້ວ ເມືອງລາວໄດ້ປະສົບແຕ່ເສິກສົງຄາມຢູ່ສເມີມາ ເພື່ອນພີ່ນ້ອງຮ່ວມຊາຕແລະລູກຫຼານຂອງພວກທ່ານຫຼາຍຄົນ ກໍໄດ້ເສັຍຊີວິດຍ້ອນໃນເສິກສົງຄາມນັ້ນ. ຜົລປະໂຍດອັນດີງາມທີ່ຈະນຳມາສູ່ທ່ານ ແລະປະເທດຊາຕນັ້ນກໍບໍ່ມີເລີຍ ຫຍັງໄປກ່ວານັ້ນອີກ ແທນທີ່ພວກທ່ານຈະໄດ້ຮັບຄວາມສະງົບສຸກ ແລະຄວາມປອດພັຍ ທ່ານກໍເລີຍໄດ້ມາຢູ່ໃນສະພາບທີ່ເຄາະຮ້າຍ ແລະແສນກັນດານທີ່ສຸດ ພາຍຫລັງການຈັດຕັ້ງຣັຖບານປະສົມແລ້ວ ພວກທ່ານຫວັງໃຈວ່າປະເທດຊາຕບ້ານເມືອງລາວຈະລອດພົ້ນ ຈາກເສິກສົງຄາມຊຶ່ງລາວທັງຊາຕບໍ່ພຶງປຣາຖະໜາແລະຢາກເຫັນຄວາມເຈີນຂອງປະເທດຊາຕ. ພ້ອມກັນສ້າງສາພັທນາປະເທດຊາຕຂອງຕົນໃຫ້ມີຄວາມຮຸ່ງເຮືອງສີວິໄລ ໃຫ້ເໝືອນກັບປະເທດອື່ນໆໃນໂລກ. ແຕ່ໜ້າເສັຽດາຍແທນທີ່ຈະໄດ້ເຫັນ ຄວາມເຈີນຮຸ່ງເຮືອງ ຄວາມສົມບູນພູນສຸກທາງເສຖກິຈແລະຄວາມສະງົບສຸກຂອງປະເທດຊາຕແລ້ວ ການເປັນຢູ່ຂອງປະຊາຊົນແລະເສຖກິຈຂອງຊາຕ ຍິ່ງທະວີມີຄວາມຕົກຕ່ຳເກືອບຈະບໍ່ມີ

ຣະດັບ  ຄວາມຍຸຕິທັມ ແລະຄວາມທ່ຽງທັມທາງດ້ານສັງຄົມເກືອບຈະບໍ່ມີເລີຍ ປະຊາຊົນລາວທັງຊາຕທຸກເຜົ່າ ທຸກເພດທຸກວັຍເກີດມີຄວາມເບື່ອໜ່າຍ ວິຕົກກັງວົນຕໍ່ຊີວິດແລະການເປັນຢູ່ຂອງຕົນ ຕລອດມາເທົ່າທຸກວັນນີ້.

## ໔. ການປົກຄອງສມັຍກ່ອນ ກໍບໍ່ໄດ້ຮັບຄວາມສະດວກໃຫ້ແກ່ຄ່າຄອງຊີບຂອງປະຊາຊົນ

ຕາມປົກຕິແລ້ວ ການລ້ຽງຊີວິດຢູ່ເມືອງລາວກໍເປັນບັນຫາໄຫຍ່ ຄ່າຄອງຊີບກໍຍິ່ງແພງທະວີຂຶ້ນທຸກໆວັນຢ່າງເຫຼືອເຊື່ອ ແຕ່ເງິນເດືອນແລະລາຍໄດ້ຕ່າງໆກໍບໍ່ໄດ້ຂຶ້ນພ້ອມເລີຍ ເມື່ອເປັນດັ່ງນີ້ ເງິນທີ່ໄດ້ມາກໍບໍ່ພໍຈະຊຸກົນລ້ຽງຄອບຄົວໄດ້ ຈົນກ່ວາພວກທີ່ເຄີຍຫາກິນດ້ວຍສິນທັມແລະຊື່ສັດ ກໍຈຳເປັນຕ້ອງໄດ້ເຮັດຜິດກົດໝາຍຢ່າງໃດຢ່າງນຶ່ງ ເພື່ອໃຫ້ພໍລ້ຽງຄອບຄົວຂອງຕົນ. ຄົນຂີ້ລັກ ຄົນຂີ້ປຸ້ນ ຄົນຂີ້ຂະໂມຍ ກໍທະວີຂຶ້ນທຸກໆບ່ອນເກືອບທົ່ວປະເທດ ດັ່ງນີ້ ສມັຍເມື່ອທ່ານໄດ້ປົກຄອງຢູ່ນັ້ນກໍບໍ່ມີຫຍັງເລີຍ ຍິ່ງໄປກ່ວານັ້ນອີກ ພວກທ່ານຈຳຕ້ອງໄດ້ປົບໜີ ຕ້ອງໄດ້ປະລະຍາຕພີ່ນ້ອງ ເຮືອນຊານບ້ານຊ່ອງແລະປະເທດຊາຕຂອງຕົນ ໂດຍຮູ້ສຶກຕໍ່ຄວາມຜິດ

ຫວັງ.

໓. ກ່ຽວກັບການສຶກສາແລະພັທນາປະເທດຊາຕ

ທ່ານຜູ້ເປັນພໍ່ເປັນແມ່ຂອງເດັກນ້ອຍ ເຄີຍຫວັງສະເມີວ່າ ຢາກໃຫ້ລູກໃຫ້ຫຼານຂອງຕົນ ມີການສຶກສາດີພໍສົມຄວນ ເພາະວ່າທາງກະຊວງສຶກສາທິການ ກຳລັງໄດ້ປະຕິຮູບແຜນການສຶກສາພັທນາໃຫ່ມເພື່ອໃຫ້ລູກຫຼານທຸກໆຄົນໄດ້ຮັບຄວາມຮູ້ແລະວິຊາການຕ່າງໆ ບໍ່ວ່າໃນການຮຽນວິຊາອາຊີບຫຼືການສຶກສາຊັ້ນສູງ. ພາຍຫຼັງໄດ້ຮັບການສຶກສາແລ້ວລູກຫຼານຂອງພວກທ່ານກໍຈະໄດ້ມີໂອກາດສ້າງສາພັທນາປະເທດຊາຕຂອງຕົນ ຕາມຄວາມຮູ້ຄວາມສາມາດຂອງໃຜລາວ.

ຜູ້ເປັນພໍ່ເປັນແມ່ ກໍເຄີຍປາຖນາວ່າ ຢາກຈະໄດ້ລູກເຂີຍລູກໄພ້ ເພື່ອຊ່ວຍພໍ່ເຖົ້າແມ່ເຖົ້າໃນເວລາເຮັດວຽກການ ແລະຢາກຈະໄດ້ເຫັນຫຼານ ເຫຼັນຫຼາຍໆຄົນ.ເພາະຄົນລາວເຄີຍນັບຖືວ່າ ຍາພໍ່ຍາແມ່ ຊຶ່ງມີລູກຫຼານຫຼາຍ ເປັນຄົນທີ່ເຈີນດີ ແລະມີບຸນປາຣະມີຫຼາຍ.

ຄວາມຈິງແລ້ວ ໃນປະຈຸບັນຊາວລາວສ່ວນຫຼາຍ ກໍມີ

ຄວາມເສັຽໃຈດ້ວຍການແຕກແຍກຈາກກັນ. ບາງຄັ້ງລູກພັດພຣາກພັດແມ່ພັດລູກ ລາງເທື່ອ ລູກໄດ້ປົບໜີແລະພໍ່ແມ່ຍັງຢູ່ເມືອງລາວ ຫຼາກງືນກໍມີຄວາມຄິດຮອດຫາກັນ ແລະຖາມຕົວເອງວ່າ ຈະໄດ້ເຫັນໜ້າກັນອີກຫຼໍບໍ່ ?

## ໔. ຝ່າຍສາສນາ ທ່ານເຄີຍໄດ້ອາສັຍຄູບາອາຈານ ແລະວັດວາອາຮາມ

ວັດວາອາຮາມ ເປັນສະເໜືອນສັນຍາລັກ ອັ່ງໝາຍເຖິງຄວາມປອດໄພແລະເປັນບ່ອນອຸປຖັມສັກກາຣະບູຊາຂອງຊາຕ ແລະທັງເປັນບ່ອນສິດສອນຄົນໃຫ້ປະພຶດຕົນເປັນຄົນດີແລະມີຄວາມຮູ້ໄຜງກໍມັກເຂົ້າວັດເພື່ອທຳບຸນທຳທານມີຄວາມຍິນດີຊຸ່ມຊື່ນຮ່ວມກັນ ຄູບາອາຈານເປັນຜູ້ສັ່ງສອນຄວາມດີຄວາມງາມແລະຮັກສາບ້ານເມືອງ ແລະປະກອບອາຊີບທຳມາຫາກິນໂດຍຄວາມສຸດຈະຣິດແລະທ່ຽງທັມ ຕັ້ງຕົນຢູ່ໃນສິນໃນທັມ. ປະຈຸບັນນີ້ ຄວາມປອດໄພບ່ອນອຸປຖັມຄ້ຳຊູແລະຄວາມມ່ວນຊື່ນ ກໍຄ່ອຍໄດ້ສົນສູດລົງໄປແລ້ວ ທ່ານບໍ່ມີບ່ອນທີ່ຈະເພິ່ງພາອາສັຍທາງສາສນາຫຼວງທີ່ທ່ານເຄີຍອາສັຍເຊື່ອຖືນັ້ນ ກໍໄດ້ສົນສູດລົງແລ້ວ.

## ໕. ຄວາມຫວັງຂອງທ່ານເພື່ອຫຼີກເວັ້ນຈາກຄວາມ ກັນດານ ແລະການທຸກຍາກລຳບາກ.

ທ່ານໄດ້ປົບໜີຈາກປະເທດຊາດຂອງທ່ານ ເພື່ອຫຼີກເວັ້ນຈາກອັນຕລາຍຫຼືຄວາມກັນດານ ແລະຄວາມບໍ່ປອດໄພຕໍ່ຊີວິດຂອງທ່ານເອງແລະຄອບຄົວຊຶ່ງທ່ານມີຢູ່. ທ່ານໄດ້ມາອາສັຍຢູ່ປະເທດຝັ່ງເສດເປັນເໝືອນພົນແຜ່ນດິນຂອງທ່ານເອງ ເພາະວ່າ ການທຳສົງຄາມກໍບໍ່ມີຜົນປະໂຍດ ຢູ່ໃນປະເທດນີ້ ເຕັມແຕ່ຄວາມປອດໄພ ອົງການຕ່າງໆກໍໄດ້ຕ້ອນຮັບທ່ານເປັນຢ່າງດີກໍມີຢູ່ທົ່ວທຸກແຫ່ງ ຄວາມຊ່ວຍເຫຼືອໃນທຸກໆດ້ານ ແລະທຸກວິທີທາງກໍໄດ້ຈັດຂຶ້ນໄວ້ເໝືອນກັນ. ແຕ່ວ່າເມື່ອເວລາທ່ານຢູ່ໃນສູນອົພຍົກໄດ້ຫຼາຍວັນຫຼາຍເດືອນແລ້ວກໍຄ່ອຍໄດ້ຮູ້ເມື່ອວ່າ ຄວາມກັນດານແລະຄວາມຫຍຸ້ງຍາກລຳບາກຕ່າງໆກໍຍັງມີຢູ່ ແຕ່ເປັນແບບໃໝ່ ບາງຄົນຊອກຫາວຽກຫາງານໂດຍສຸດສະຕິກຳລັງ ແຕ່ກໍບໍ່ໄດ້ຜົນເລີຍ ຕົວຢ່າງງານທີ່ດີໆແລະເບົາໆ ແຕ່ທ່ານຫາກບໍ່ມີຄວາມຮູ້ພໍຈະທຳວຽກງານອັນນັ້ນໄດ້ ແລະງານທີ່ໜັກທ່ານກໍບໍ່ມີຄວາມສາມາດຈະທຳໄດ້ເໝືອນກັນ.

ເມື່ອເປັນດັ່ງນີ້ ທ່ານກໍຄຶງຄິດຮອດປະເທດລາວເພາະ

ວ່າການທຳມາຫາກິນຢູ່ໃນປະເທດຝັ່ງເສດນີ້ ກໍມີຄວາມແສນຢາກລຳບາກກວ່າຢູ່ໃນເມືອງລາວ ສ່ວນຫຼາຍຜູ້ເປັນແມ່ບ້ານແມ່ເຮືອນກໍມີການຢູ່ຢາກລຳບາກ ມີແຕ່ຄິດຮອດບ້ານເຮືອນຂອງຕົນເອງທີ່ເຄີຍຢູ່ ແລະປະເທດຊາດຂອງຕົນຢູ່ສເມີ.

ຫຼາຍຄົນກໍຮູ້ສຶກມີຄວາມຜິດຫວັງດ້ວຍວ່າສະຖານະການບ້ານເມືອງແຕກຕ່າງກັນເທົ່າໃດກໍຕາມ ກໍແຮງຍິ່ງມີຄວາມກັນດານແລະອັນຕຣາຍເທົ່ານັ້ນ. ບາງເທື່ອ ຄວາມຄິດຄວາມເຫັນແລະການປາກເວົ້າຂອງຊາວຝັ່ງເສດບາງຄົນ ບໍ່ເໝາະສົມກັບຈິດໃຈຂອງທ່ານ ກໍພາໃຫ້ທ່ານເກີດຄວາມຕົກໃຈ ອານາຄົດເມືອງຝັ່ງເສດຈະເປັນໄປໃນຮູບໃດ ກໍບໍ່ມີຜູ້ໃດອາຈຮູ້ໄດ້ ດັ່ງດຽວກັບຄວາມປອດໄພອັນແທ້ຈິງ ກໍບໍ່ມີເລີຍ.

ເມື່ອເປັນເຊັ່ນນີ້ແລ້ວ ທ່ານຈະເພິ່ງພາອາສັຍຢູ່ທີ່ໃດ? ຈະຫວັງເພິ່ງຜູ້ໃດ? ຫມົດຄວາມຫວັງອີຫຼີແລ້ວຫຼືບໍ່? ທ່ານຢ່າສູ້ກັງວົນໃຈຈົນເກີນຄວນ ຂໍໃຫ້ທ່ານຄິດພິຈາຣະນາຕາມທາງໄຫມ່ຕໍ່ໄປ.

## ພຣະເຢຊູຊົງເປັນຄວາມຫວັງຂອງມະນຸດຊາຕ

ແຕ່ກ່ອນຢູ່ເມືອງລາວ ທ່ານເຄີຍເຫັນແລະໄດ້ຍິນຜູ້ປະ

ກາດຂ່າວປະເສີດພຣະເຢຊູຕາມບ້ານ ຕ່າມເມືອງທົ່ວພຣະຣາຊອານາຈັກລາວ ວິຫານສອນສາສນາຂອງພຣະເຢຊູກໍມີຫລາຍບ່ອນຫລາຍທີ່ ພວກອາຈານຊາວຕ່າງດ້າວທີ່ມີຊື່ວ່າ MISSION EVANGELIQUE ກໍໄດ້ມີຊື່ສຽງ ແລະມີຄວາມເຈຕນາດີຕໍ່ຣັຖບານແລະປະຊາຊົນຊາວລາວເພາະວ່ານອກຈາກທາງສາສນາແລ້ວ ພວກເຮົາກໍຍັງໄດ້ຊ່ວຍເຫຼືອປະຊາຊົນຊາວລາວອີກ ເປັນຕົ້ນ ທາງດ້ານການສຶກສາການຮັບໃຊ້ປົວພະຍາດຕ່າງໆ ແລະທັງໄດ້ຊ່ວຍເຫຼືອຄົນຍາກຄົນຈົນອີກດ້ວຍ ຄົນລາວທີ່ໄດ້ຖືສາສນາພຣະເຢຊູກໍມີບເປັນ ພັນໆໝື່ນໆທົ່ວພຣະຣາຊອານາຈັກລາວ ເຖິງວ່າທ່ານບໍ່ສົນໃຈໃນເຣື່ອງຂ່າວປະເສີດ ແລະບໍ່ເຄີຍຖືສາສນາພຣະເຢຊູຊຶ່ງທ່ານໄດ້ເຄີຍຖືວ່າເປັນສາສນາຂອງຊາວຝັ່ງກໍຕາມ ປະຈຸບັນທ່ານຕ້ອງການຄວາມອອຍໃຈ. ຄວາມສຸກ ແລະຄວາມແນ່ໃຈ ທີ່ໝັ້ນຄົງຢູ່. ສິ່ງເຫຼົ່ານີ້ທ່ານຈະຫາໄດ້ໂດຍທາງພຣະເຢຊູເທົ່ານັ້ນ ເຖິງວ່າ ທ່ານຍັງບໍ່ເຊື່ອຖືກໍຕາມແຕ່ຂໍຖືໂອກາດນີ້ເພື່ອອະທິບາຍວ່າ ດ້ວຍເຫດໃດ ພຣະເຢຊູຈຶ່ງເປັນແນວທາງແຫ່ງຄວາມຫວັງຂອງມະນຸດຊາດ.

## ໑. ເພາະວ່າ ພຣະອົງຊົງເປັນຄວາມຈິງ

ທ່ານກາງບັນດາມະນຸດເຮົານີ້    ໃຜໆກໍຫວັງໃຈບໍ່ໄດ້ ເພາະເຂົາເຄີຍຕົວະກັນທັງຫຼອກທັງລວງກັນຢູ່ສເມີ    ເຣື່ອງຂ່າວຕ່າງໆຊຶ່ງເຮົາເຄີຍຟັງນຳວິທຍຸຫຼືອ່ານໃນໜ້າໜັງສືພິມປະຈຳວັນ    ເຮົາຈະຣັບຮູ້ວ່າເປັນຄວາມຈິງແທ້ນັ້ນຍັງບໍ່ໄດ້ ເຣື່ອງຂ່າວຊຶ່ງມາຈາກພັກພວກນີ້ ສ່ວນຫຼາຍກໍບໍ່ກົງກັນກັບພັກພວກນັ້ນ ຫຼາຍກວ່ານີ້ອີກຣະຫວ່າງຄອບຄົວດຽວກັນການຕົວະຍົວະອາຈມີເໝືອນກັນ    ຄົນເຮົາຄິດວ່າມີຜູ້ໃດແດ່ທີ່ບໍ່ເຄີຍຕົວະຢູ່ໃນໂລກນີ້?.

ກ່ຽວກັບທາງສາສນາ ກໍມີບັນຫາຢູ່ເໝືອນກັນສາສນາຕ່າງໆກໍມີຫຼາຍ ຈົນນັບບໍ່ໄດ້ ຫຼັກຄຳສອນຫຼືຫຼັກສູດຕ່າງໆແຫ່ງສາສນາດັ່ງກ່າວນັ້ນ ກໍມັກຜິດກັນ    ເພາະວ່າເຂົາກ່າວເຖິງພຣະຊຶ່ງບໍ່ກົງກັນ    ແລ້ວບັນດາມະນຸດສ່ວນຫຼາຍເຄີຍນຶກວ່າເຖິງຈະມີຫຼາຍສາສນາ ແລະພຣະຊຶ່ງບໍ່ກົງກັນກໍຕາມ    ແລ້ວແຕ່ຜູ້ຈະເຊື່ອຖື    ເມື່ອເຂົາຖືຕາມຫຼັກຄຳສອນດ້ວຍຄວາມສຸດຈະຣິດຈາກຈິດໃຈຂອງພວກເຂົາແລ້ວ ນີ້ແຫຼະຄືສິ່ງສຳຄັນ.

ເອົາແຫຼະຄວາມນຶກຄິດເຫຼົ່ານີ້ ບໍ່ສົມກັບສັດຕິປັນຍາຊຶ່ງພຣະເຈົ້າອົງທ່ຽງແທ້ຊົງປະທານໃຫ້ແກ່ຊາວມະນຸດ ສມັຍປະຈຸບັນ ທ່ານຖືວ່າເປັນສມັຍອະຣະຍະທັມທີ່ປະກອບດ້ວຍຄວາມ

ລົວລັຍ ສະນັ້ນ ທ່ານຕ້ອງການຮັບພິຈາຣະນາ ກ່ຽວກັບຊີວິດ ໃນອານາຄົດ ຄືວ່າ ເມື່ອຄວາມຕາຍໃກ້ເຂົ້າມາແລ້ວ ທ່ານ ຄິດວ່າຈັ່ງໃດແດ່? ຈະໄປຢູ່ໃສ? ທ່ານສົນໃຈເຣື່ອງນີ້ບໍ? ຜູ້ໃດຈະສາມາດບອກທ່ານວ່າ ໂລກໃໝ່ຈະເປັນຢ່າງໃດແທ້ ແລະຜູ້ຕາຍໄປແລ້ວຈະກາຍໄປເປັນຫຍັງ?ທັງຈະຢູ່ທີ່ໃດ? ນີ້ ແຫຼະຄືບັນຫາຂອງມະນຸດ ຊຶ່ງບໍ່ມີຄົນໃດຈະຕອບໄດ້ໂດຍທາງ ປັນຍາເອງ ຫຼືທາງການສຶກສາຄົ້ນຄວ້າໂດຍຄວາມຮູ້ແຫ່ງມະນຸດ ຄົນ ແຕ່ສາທຸການແດ່ ພຣະຜູ້ເປັນເຈົ້າອົງທ່ຽງແທ້ຄືພຣະເຢ ຊູຊົງຕອບເຮົາໄດ້ ເພາະວ່າພຣະອົງໄດ້ສເດັດເຂົ້າມາໃນ ໂລກນີ້ ເພື່ອເປັນພຣະສູຣະສຽງຂອງພຣະເຈົ້າອົງເປັນພຣະ ເຈົ້າຂອງຊາດມະນຸດທຸກຊາດທຸກພາສາ ເມື່ອພຣະອົງກຳລັງ ດຳເນີນຊີວິດໃນໂລກນີ້ ພຣະອົງຊົງສອນວ່າ: "ເຮົານີ້ແຫຼະ ເປັນທາງນັ້ນ ເປັນຄວາມຈິງແລະເປັນຊີວິດບໍ່ມີຜູ້ໃດມາເຖິງ ພຣະບິດາ ນອກຈາກມາທາງເຮົາ" (ອ່ານໃນພຣະຄຣິສຕະ ທັມຄຳພີໜັງສືຂ່າວປະເສີດໂຢຮັນບົດ ໑໔ ຂໍ້ ໖).

ອີກປະການນຶ່ງ ກ່ອນຈະໄດ້ຖວາຍຊີວິດເປັນເຄື່ອງບູ ຊາຍົກບາບໂທດຂອງພວກມະນຸດ ພຣະເຢຊູຊົງຕອບທ່ານ ປີລາດຊຶ່ງເປັນຜູ້ຄູ້ມຄອງນັ້ນວ່າ "ຝ່າຍເຮົາໄດ້ເຂົ້າມາແລະ

ໄດ້ເກີດຂຶ້ນໃນໂລກນີ້ ຄືເພື່ອຈະເປັນພະຍານເຖິງຄວາມຈິງ ທຸກໆຄົນທີ່ຢູ່ຝ່າຍຄວາມຈິງ ຍອມຟັງສຽງຂອງເຮົາ" (ໂຢຮັນ ບົດ ໑໘ ຂໍ້ ໓໗) ຖ້າວ່າມີຄວາມຕົວະທົ່ວໄປ ກໍເພາະວ່າ ໂລກນີ້ ບໍ່ໄດ້ເຊື່ອຟັງພຣະເຢຊູ ຜູ້ຊຶ່ງເປັນຄວາມຈິງ.

## ໔. ພຣະເຢຊູຊຶ່ງເປັນທາງແຫ່ງການລອດພົ້ນ

ກ່ອນທ່ານຈະມາເມືອງຝຣັ່ງ ທ່ານໄດ້ຕິດຕໍ່ກັບສະຖານທູດຝຣັ່ງເສດທີ່ກຸງເທບ ເພື່ອຂໍອະນຸຍາດເຂົ້າເມືອງຝຣັ່ງ ທ່ານກໍໄດ້ວາງຕົນທຸກວິທີທາງ ແລະໄດ້ຍອມທຳໜັງສືຕ່າງໆຕາມຄຳສັ່ງຂອງສະຖານທູດ ການທີ່ທ່ານເອົາໃຈໃສ່ວາງຕົນເຂົ້າກະສານຕ່າງໆໂດຍສຸດຄວາມສາມາດຂອງທ່ານກໍເພາະທ່ານຕ້ອງການຢາກຈະມາຢ່າງເຕັມທີ່ ການທີ່ທ່ານໄດ້ມາເຖິງເມືອງປາຣີ ກໍຍ້ອນທ່ານເອງຍອມຂຶ້ນຣົຖຂີ່ຍົນຕາມສະຖານທີ່ແລະຕາມເວລາ ຊຶ່ງເຂົາໄດ້ບົ່ງບອກໃຫ້ແກ່ທ່ານ.

ເຊັ່ນດຽວກັນນັ້ນ ກ່ອນກັບການທີ່ຈະໄປເຖິງບ່ອນສຸກເສີມຄືເມືອງຊັ້ນຟ້າ (ບ່ອນບໍ່ມີທຸກບໍ່ມີຍາກ) ທ່ານຕ້ອງໄປຕາມທາງຊຶ່ງພຣະເຈົ້າຊົງໄດ້ຈັດໄວ້ໃຫ້ແລ້ວ ທາງນັ້ນຄືທາງພຣະເຢຊູນັ້ນເອງ ເພາະວ່າພຣະອົງໄດ້ຊົງສເດັດລົງມາ

ຈາກສະຫວັນຊັ້ນຟ້າສູ່ພື້ນພຣະທໍຣະນີ ເພື່ອໃຂທາງໃຫ້ແກ່ເຮົາຊາດມະນຸດ ໃນພຣະທັມຄຳພີຊີວິດປະກອບດ້ວຍ ພຣະຄຳຂອງພຣະເຈົ້າ ອ່ານໃນໜັງສືໂຣມບົດ ໖ ຂໍ້ ໒໓ ວ່າ "ທຸກສິນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ" ໝາຍຄວາມວ່າ ບາບຂອງມະນຸດເຮົາມີໄດ້ຕັດທາງຊຶ່ງນຳໄປເຖິງພຣະເຈົ້າ ຈຶ່ງເປັນເຫດໃຫ້ມະນຸດເຮົາເຖິງແກ່ມໍຣະນະກັມໂດຍບໍ່ມີຄວາມຫວັງຈະເຫັນຄວາມສຸຂ ຄືຊີວິດທີ່ມີຢູ່ໃນພຣະເຈົ້າອົງທ່ຽງແທ້ຂອງເຮົາທັງຫລາຍ.

ພຣະຄຳພີຍັງຂຽນວ່າ "ຄ່າຈ້າງຂອງຄວາມບາບຄືຄວາມຕາຍ" ຄວາມຕາຍນັ້ນ ໝາຍເຖິງຄວາມຈິບຫາຍໃນນາຣົກ ທ່ານຜູ້ອ່ານຢ່າຄິດວ່າທ່ານບໍ່ມີບາບຢ້ານວ່າທ່ານກຳລັງຫຼອກລວງໂຕເອງ ເພາະພຣະເຈົ້າຊົງຖືວ່າມະນຸດທຸກຄົນມີບາບຢູ່ສເມີ ເມື່ອທ່ານຮູ້ວ່າມີບາບຢູ່ ຢ່າສູ້ເຂົ້າໃຈຜິດວ່າທ່ານຈະຊ່ວຍໂຕເອງໄດ້ໂດຍການທຳບຸນນັ້ນ ເພາະວ່າການທຳບຸນບໍ່ສາມາດຈະລ້າງບາບໃຫ້ບໍຣິສຸດໄດ້ ເຖິງຈະໄດ້ບຸນຫຼາຍເທົ່າໃດກໍຕາມ ການທຳບຸນດັ່ງກ່າວນີ້ເປັນທາງນຶ່ງຊຶ່ງມະນຸດປະດິດຂຶ້ນເອງໂດຍຖືກການຫຼອກລວງຈາກຜີມານແລະບໍ່ເປັນທາງຊຶ່ງພໍພຣະທັຍຂອງພຣະເຈົ້າ ຖ້າວ່າການທຳບຸນ

ຈະຊ່ວຍມະນຸດໃຫ້ລອດພົ້ນແລະແກ້ໃຂບັນຫາແຫ່ງຄວາມບາບໄດ້ ເຫດໃດພຣະເຈົ້າຈຶ່ງໄດ້ຊົງໃຊ້ພຣະບຸດອົງດຽວຂອງພຣະອົງຄື ພຣະເຢຊູຄຣິສ ລົງມາເພື່ອໃຂທາງໃຫ້ເຮົາໂດຍການທໍຣະມານທີ່ໄມ້ກາງແຂນ ຄວາມຈິງແລ້ວ ນອກຈາກໄດ້ເຊື່ອຖືພຣະເຢຊູ ທ່ານຈະບໍ່ມີທາງອື່ນນຳໄປສູ່ຊີວິດຊົ່ວນິຣັນດອນ ແລະເປັນເຫດໃຫ້ທ່ານຫມົດຄວາມຫວັງຕລອດຊີວິດຂອງທ່ານ.

## ນ. ພຣະເຢຊູຊົງສເດັດເຂົ້າມາໃນໂລກຕາມແຜນການຂອງພຣະເຈົ້າ

ເຣື່ອງກຳເນີດຂອງພຣະເຢຊູ ຄືວັນໂນແອນຊຶ່ງບັນດາມະນຸດເຄີຍຖືແລະນັບຖືເປັນວັນສຳຄັນ ຈົນໄດ້ຕັ້ງສັກກະຣາດ (ສມັຍ) ໃຫມ່ເອີ້ນວ່າຄຣິສຕະສັກກະຣາດ ການກຳເນີດຂອງພຣະອົງນັ້ນ ບໍ່ໄດ້ເກີດຕາມທັມມະດາແຕ່ວ່າໄດ້ເກີດຂຶ້ນຕາມທີ່ພຣະເຈົ້າຊົງໄດ້ຄາດຫມາຍໄວ້ລ່ວງຫນ້າ ຕັ້ງແຕ່ພໍ່ແມ່ເດີມຄື ປູ່ສັງກະສາຍ່າສັງກະສີ ຊຶ່ງໄດ້ຕົກໃນຄວາມບາບ ຕັ້ງແຕ່ນັ້ນມາ ພຣະເຈົ້າຈຶ່ງຊົງດັດແຜນການໃຫມ່ເພື່ອຊ່ວຍມະນຸດຊາດໃຫ້ລອດພົ້ນຈາກການລົງໂທດແລະຈິບຫາຍ.

ພຣະອົງນີ້ ເປັນພຣະເຈົ້າຜູ້ຊຶ່ງຊົງນິຣະມິດສ້າງຟ້າ

ແລະແຜ່ນດິນໂລກ ພ້ອມທັງສັບພະທຸກສິ່ງທີ່ມີຢູ່ໃນໂລກດ້ວຍວ່າມະນຸດໃນໂລກຈັກກະວານ ທັງສັດເດັຽຣະສານກໍບໍ່ໄດ້ເກີດມາດ້ວຍຕົນເອງ ແລະມະນຸດຊາຕກໍບໍ່ໄດ້ອອກມາຈາກລິງ ຕາມທີ່ບາງຄົນມັກອ້າງອິງອອກມາ ພຣະທັມຄຳພີກ່າວວ່າ ພຣະຜູ້ເປັນເຈົ້າຊົງໄດ້ສ້າງມະນຸດເຮົານີ້ໃຫ້ມີຮູບຮ່າງຄ້າຍຄືກັນກັບພຣະເຈົ້າແຕ່ວ່າ ເມື່ອພໍ່ແມ່ເດີມນັ້ນໄດ້ທຳບາບໂດຍບໍ່ຟັງຄວາມແລະກະບົດຕໍ່ພຣະອົງ ເມື່ອເຫັນວ່າມະນຸດຊຶ່ງພຣະເຈົ້າໄດ້ຊົງສ້າງຂຶ້ນນັ້ນໄດ້ຖືກທຳລາຍດ້ວຍບາບຂອງເຂົາ ພຣະເຈົ້າຈຶ່ງຊົງພຣະເມດຕາກະຣຸນາແກ່ມະນຸດ ແລະໄດ້ຊົງຈັດຕັ້ງແຜນການໄວ້ເພື່ອມະນຸດຈະມີທາງລອດພົ້ນຈາກອຳນາດຜີມານຊຶ່ງໄດ້ຄອຍເຂົ້າມາຫຼອກລວງລູກຂອງພຣະອົງ

ແຜນການຂອງພຣະເຈົ້ານັ້ນ ຄືການໄຖ່ໂທດທີ່ມີຢູ່ໃນພຣະເຢຊູ ກໍໄດ້ຂຽນໄວ້ໃນໜັງສືຂ່າວປະເສີດນັ້ນທຸກໆເຫຼັ້ມສະນັ້ນ ພວກເຮົາຈຶ່ງອ່ານໃນໜັງສື ມັດທາຍ ກ່ຽວເຣື່ອງກຳເນີດຂອງພຣະເຢຊູວ່າ "ການທັງປວງນີ້ ເກີດຂຶ້ນເພື່ອຈະໃຫ້ສຳເຣັດຕາມທີ່ພຣະເຈົ້າຜູ້ເປັນເຈົ້າໄດ້ຊົງ ກ່າວໄວ້ດ້ວຍຜູ້ປະກາດພຣະທັມວ່າ ເບິ່ງແມ ຍິງພົມມະຈາຣີນັ້ນຈະມີທ້ອງ ແລະປະສູດບຸດຄົນນຶ່ງ ແລະເຂົາກໍຈະເອີ້ນຊື່ບຸດນັ້ນວ່າ

<u>ເອມານເອນ</u> (ແປວ່າ ພຣະເຈົ້າຊົງສະຖິດຢູ່ກັບເຮົາ ທັງຫຼາຍ) ພຣະອົງຍັງຊົງພຣະນາມອີກວ່າ "<u>ເຢຊູ</u>" ແປວ່າ ພຣະຜູ້ໂຜດໃຫ້ລອດພົ້ນ.

ທ່ານຜູ້ອ່ານ ຖ້າທ່ານຕ້ອງການຢາກຮູ້ເຣື່ອງການກຳເນີດຂອງພຣະເຢຊູທັງການມະຫັສຈັນຂອງພຣະອົງເຊີນທ່ານອ່ານຢູ່ໃນໜັງສືຂ່າວປະເສີດ ຊຶ່ງຈະແຈ້ງໃຫ້ຮູ້ໄດ້ ທ່ານຈະພົບວ່າ ເປັນເຣື່ອງມະຫັສຈັນ ຊຶ່ງຜິດກັບເຣື່ອງທັມມະດາ ເປັນເຫດການຊຶ່ງໄດ້ເກີດຂຶ້ນ ຕາມທີ່ຜູ້ທຳນວຍຫຼາຍຄົນໄດ້ທຳນວຍໄວ້ລ່ວງໜ້າເປັນຮ້ອຍໆ ພັນໆມາແລ້ວ.

## ໔. <u>ພຣະເຢຊູ ຊົງສິ້ນພຣະຊົນເພື່ອມະນຸດ</u>

ຫຼາຍຄົນບໍ່ເຂົ້າໃຈວ່າ ການສິ້ນພຣະຊົນຂອງພຣະເຢຊູເປັນປະໂຍດຢ່າງໃດ ຂ້າພະເຈົ້າຂໍຕອບຕາມຄວາມຈິງວ່ານອກຈາກການສິ້ນພຣະຊົນຂອງພຣະອົງແລ້ວ ມະນຸດຊາດບໍ່ມີຄວາມຫວັງຝ່າຍວິນຍານເລີຍ ພຣະເຢຊູຊົງສເດັດມາເປັນສະພາບມະນຸດຊົ່ວຄາວ ກໍເພື່ອວ່າຈະມີທາງຖວາຍພຣະອົງເອງເປັນເຄື່ອງບູຊາໂດຍການສິ້ນພຣະຊົນເທິງໄມ້ກາງແຂນເພື່ອບາບໂທດຂອງມະນຸດທັງປວງ.

ຄາວເວລາພຣະເຢຊູ ກຳລັງດຳເນີນຊີວິດໃນໂລກນີ້ ພຣະອົງໄດ້ຊົງກະທຳສິ່ງມະຫັສຈັນຫຼາຍປະການ ເຊັ່ນວ່າ: ພຣະອົງ ເຮັດໃຫ້ຄົນຫູໜວກຟັງໄດ້ຍິນ ເຮັດໃຫ້ຄົນຕາບອດ ເຫັນແຈ້ງ ເຮັດໃຫ້ຄົນເຈັບປ່ວຍຕ່າງໆຫາຍຈາກພະຍາດບັດ ດຽວແລະຄົນທີ່ຕາຍແລ້ວ ພຣະອົງເຮັດໃຫ້ໄດ້ຄືນມາຈາກ ຄວາມຕາຍດ້ວຍອິດທິຣິດອັນປະເສີດຂອງພຣະອົງ ສິ່ງເຫຼົ່ານີ້ ໝາຍຄວາມວ່າ ພຣະເຢຊູບໍ່ໄດ້ເປັນມະນຸດທັມມະດາ ເທົ່ານັ້ນ ແຕ່ຍັງເປັນພຣະເຈົ້າ ເຈົ້າແຫ່ງຊີວິດຂອງມະນຸດທົ່ວໄປ ເຖິງດັ່ງນັ້ນກໍດີ ຫາກພຣະເຢຊູບໍ່ຮັບການຊົ້ມພຣະຊົນແທນ ມະນຸດ ການມະຫັສຈັນຂອງພຣະອົງ ຄົງຈະບໍ່ມີປະໂຍດໃດໆ ທັງສົ້ນ ການຊົ້ມພຣະຊົນຂອງພຣະອົງທີ່ໄມ້ກາງແຂນມີຄຸນຄ່າ ອັນເຫຼືອລົ້ນ ແລະບໍ່ສິ້ນສູດເລີຍ ເພາະວ່າພຣະອົງຜູ້ຊົງ ຖວາຍຊີວິດແທນມະນຸດຊົງບໍຣິສຸດຊອບທັມ ປາສຈາກຄວາມ ບາບ ພຣະອົງຊົງເສັຽຊະລະຊີວິດ ກໍເພາະວ່າ ດ້ວຍຄວາມ ຮັກອັນໃຫຍ່ຫຼວງ ທີ່ມີຕໍ່ເຮົາຊາດມະນຸດທັງປວງ.

## ๕. <u>ພຣະເຢຊູ ຊົງຄືນພຣະຊົນ</u>

ຫຼັງຈາກການສົ້ນພຣະຊົນຂອງພຣະອົງໄດ້ສາມວັນສາມ

ຄືນແລ້ວ  ພຣະອົງໄດ້ຊົງຄືນພຣະຊົນຕາມພຣະຄຳພີໄດ້ກ່າວໄວ້ ແລະຕາມທີ່ພຼະອົງໄດ້ບອກແກ່ພວກສາວົກ ເປັນຫຼາຍໆຄັ້ງ ເນື່ອງຈາກການຄືນພຣະຊົນຂອງພຣະອົງ ເຮົາຈະພິສູດໄດ້ວ່າ :

ກ - <u>ພຣະເຢຊູຊົງເປັນພຣະເຈົ້າຢ່າງແທ້ຈິງ</u> ເພາະວ່າ ມະນຸດທັມມະດາ ບໍ່ເຄີຍຄືນມາຈາກຄວາມຕາຍ ດ້ວຍການອິດທິຣິດຂອງເຂົາ.

ຂ - <u>ພຣະເຢຊູຊົງເປັນຜູ້ບໍຣິສຸດ</u> ຄວາມຕາຍຂອງພຣະອົງ ບໍ່ໃຊ່ເປັນການລົງໂທດ ແຕ່ວ່າເປັນການຮັບບາບໂທດແທນມະນຸດທັງປວງ.

ຄ - <u>ການຄືນພຣະຊົນນັ້ນ ເປັນການຢືນຢັນສຳລັບເຮົາ</u> ຄືວ່າໜ່ວຍໂລກຈະສິ້ນສຸດລົງ ການຕັດສິນອັນໃຫຍ່ຫຼວງຈະມີມາ ແກ່ມະນຸດຊາດ ແຕ່ວ່າຜູ້ໃດທີ່ເຊື່ອຖືພຣະເຢຊູ ກໍ່ຈະມີຊີວິດເໝືອນພຣະອົງ ແລະຜູ້ທີ່ຕາຍໄປແລ້ວໃນພຣະນາມຂອງພຣະອົງກໍ່ຈະຄືນສູ່ຊີວິດເໝືອນເດີມ ນີ້ແຫຼະ ຄືຄວາມຫວັງອັນສົດໃສແລະແນ່ໃຈແຫ່ງຊາວຄຣິສຕຽນທົ່ວໂລກ ທ່ານຜູ້ອ່ານຄົງຈະຮູ້ສຶກມີຄວາມຫວັງອັນປະເສີດນັ້ນ ຫາກທ່ານຍອມ

ເຊື່ອຖືແລະຕິດຕາມພຣະເຢຊູໄປ.

## ຄວາມເຊື່ອຖືໃນພຣະເຢຊູມີຄວາມຫມາຍຢ່າງໃດ ?

ພຣະຄຣິສຕະທັມຄຳພີ ໂຢຮັນບົດ ໓ ຂໍ້ ໑໖ ໄດ້ກ່າວວ່າ "ພຣະເຈົ້າຊົງຮັກໂລກ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນຫວັງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕຼອດໄປເປັນນິດ" ຂໍ້ຄວາມເຫຼົ່ານີ້ສະແດງເຖິງຄວາມຈິງ ຊຶ່ງເປັນຫຼັກສຳຄັນສຳລັບຊາດມະນຸດຄື:

ກ. <u>ພຣະເຈົ້າຊົງຮັກເຮົາທັງຫຼາຍ</u> ເພາະວ່າເຮົາເປັນຊາດມະນຸດຊຶ່ງພຣະຜູ້ເປັນເຈົ້າໄດ້ຊົງສ້າງໄວ້ແລ້ວ ພຣະອົງຈຶ່ງຊົງເປັນຫ່ວງນຳເຮົາຢູ່ສເມີ.

ຂ. <u>ມະນຸດຊາດກຳລັງຈິບຫາຍ</u> ເພາະວ່າໄດ້ຮັບການຫລອກລວງຈາກພີມານ ຊຶ່ງນຳໄປສູ່ຄວາມບາບຄືຄວາມຈິບຫາຍນັ້ນເອງ.

ຄ. <u>ພຣະເຈົ້າຊົງໂຜດໃຫ້ລອດພົ້ນ</u> ພຣະເຈົ້າຜູ້ຊົງມີຄວາມຮັກຕໍ່ຊາດມະນຸດ ກໍເສັຽພຣະທັຍດ້ວຍວ່າມະນຸດຢູ່ໃນບາບ ພຣະອົງຈຶ່ງໄດ້ສແດງຄວາມຮັກຂອງພຣະອົງ ໂດຍ

ໄດ້ຊົງປະທານພຣະບຸດອົງດຽວ ເພື່ອສເດັດເຂົ້າມາຊ່ວຍມະນຸດໃຫ້ລອດພົ້ນຈາກການບາບ ແລະຈິບຫາຍນັ້ນເອງ.

ການແກ້ບັນຫາ ທ່ານຫຼາຍຄົນເຄີຍນຶກວ່າ ສາສນາອັນໃດກໍດີຫມົດແລ້ວແຕ່ຜູ້ຈະເຊື່ອຖື ຖ້າເຂົາປະຕິບັດຕາມຫຼັກຄຳສອນດ້ວຍໃຈສັດຊື່ ກໍເປັນຂໍ້ສຳຄັນ ຄວາມຈິງແລ້ວບໍ່ເປັນດັ່ງນັ້ນ ເພາະພະທຳຄຳພີໄດ້ບົ່ງໄວ້ວ່າ ມີພຣະເຈົ້າອົງດຽວດ້ວຍວ່າມີແຜ່ນດິນໂລກຫນ່ວຍດຽວ ມີດວງຕາເວັນດວງດຽວທັງມີດວງເດືອນດວງດຽວເຫມືອນກັນ ແຕ່ມະນຸດເຮົານັ້ນບໍ່ໄດ້ປະຕິບັດຕາມຄຳສັ່ງສອນຂອງພຣະອົງ ຜູ້ເປັນເຈົ້າແຫ່ງຊີວິດນັ້ນ ຊາດມະນຸດຈຶ່ງໄດ້ຫຼົງຈາກທາງຂອງພຣະເຈົ້າ ແລະກຳລັງເດີນທາງຜິດໄປຕຼອດເທົ່າທຸກວັນນີ້ ເຂົາບໍ່ຮູ້ຈະໄປເຖິງທີ່ໃດ ເນື່ອງຈາກເຂົາກຳລັງເດີນທາງໃນທີ່ມືດ ຄວາມປາຖນາຂອງມະນຸດເຮົານີ້ຢາກຈະເດີນທາງດຽວ ຊຶ່ງຈະນຳໄປສູ່ຊີວິດ ທາງເສັ້ນນັ້ນແມ່ນທາງໃດ? ທາງສາສນາບໍ? ຫຼືທາງຊຶ່ງມະນຸດໄດ້ປະດິດຂຶ້ນເອງບໍ? ຫຼືທາງທຳບຸນບໍ? ຫຼືວ່າທາງຂອງໃຜຂອງລາວບໍ?

ຕາມທັມມະດາໃນໂລກນີ້ ກ່ອນທ່ານຈະໄປທາງໃດທ່ານຕ້ອງຮູ້ວ່າທາງທີ່ຈະໄປນັ້ນຈະເຖິງຈຸດມຸ້ງຫມາຍອັນແນ່

ນອນ ເຊັ່ນດຽວກັນນັ້ນ ຖ້າວ່າທ່ານຢາກຈະລອດພົ້ນຈາກການຈິບຫາຍແລະພົບທາງຊີວິດຂອງພຣະເຈົ້າ ຈຳເປັນທ່ານຈະຕ້ອງຍອມໄປຕາມທາງຊຶ່ງພຣະອົງຊົງກ່າວວ່າ "ເຮົານີ້ແຫຼະເປັນທາງນັ້ນ ເປັນຄວາມຈິງ ແລະເປັນຊີວິດ" (ໂຢຮັນບົດ ໑໔ ຂໍ້ ໖) ຜູ້ໃດທີ່ບໍ່ເດີນຕາມທາງເສັ້ນນັ້ນເຂົາຈະໄປບໍ່ເຖິງບ່ອນສຸຂເສີມຢ່າງແນ່ນອນ.

## ເງື່ອນໄຂເພື່ອໄປຕາມທາງຂອງພຣະເຢຊູ

ຄາວເວລາ ພຣະອົງຊົງດຳເນີນຊີວິດໃນໂລກນີ້ມີຊາຍຄົນນຶ່ງຊື່ວ່າ ນີໂກເດໂມ ເປັນຄູສອນຝ່າຍສາສນາໄດ້ມາຫາພຣະອົງແລະຖາມວ່າ ຂ້າພະເຈົ້າຈະຕ້ອງເຮັດຫຍັງເພື່ອຮັບຊີວິດຕຼອດໄປເປັນນິດ ພຣະເຢຊູຕອບເພິ່ນວ່າ "ເຮົາບອກທ່ານຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ບັງເກີດມາໃຫມ່ ຜູ້ນັ້ນຈະເຫັນຣາຊແຜ່ນດິນຂອງພຣະເຈົ້າບໍ່ໄດ້" ທ່ານນີໂກເດໂມ ບໍ່ໄດ້ເຂົ້າໃຈຄວາມນີ້ ໃນທຳນອງດຽວກັນກັບທ່ານ ຜູ້ອ່ານອາຈບໍ່ເຂົ້າໃຈເຊັ່ນດຽວກັນ ສະນັ້ນຂໍແນະນຳທ່ານຕໍ່ໄປນີ້ ເພື່ອແກ້ໄຂຂໍ້ຄວາມລັບນັ້ນ.

ຖ້ອຍແຖຼງຂອງພຣະເຢຊູນັ້ນ ຫມາຍຄວາມວ່າມະນຸດທຸກຄົນທີ່ເກີດມາໃນໂລກນີ້ ກໍ່ເກີດອອກຈາກທ້ອງແມ່ຊຶ່ງໃຫ້ຊີ

ວິດພຣະວິນຍານເທົ່ານັ້ນ ຊີວິດນັ້ນຈະເຖິງແກ່ຊະຣາແລະກໍ
ຈະຕາຍໄປ ຊີວິດຝ່າຍເນື້ອກາຍນັ້ນ ຈະບໍ່ເຖິງເມືອງຊັ້ນຟ້າ
ເພາະວ່າ ເປັນຊີວິດອັນເຕັມໄປດ້ວຍບາບກັມ.

ພຣະເຈົ້າຜູ້ຊົງເມດຕາກະຣຸນາ ໄດ້ຊີ້ແຈງທາງໃຫມ່
ເພື່ອມະນຸດຈະມີທາງເກີດໃຫມ່ ຄືເກີດຈາກພຣະເຈົ້າ ດ້ວຍ
ພຣະວິນຍານຂອງພຣະອົງຜູ້ທີ່ໄດ້ບັງເກີດມາໃຫມ່ ກໍໄດ້ຮັບຊີ
ວິດຈາກພຣະເຈົ້າ ຊຶ່ງເປັນຊີວິດອັນຍືນຍົງຕະຫລອດໄປເປັນນິດຖ້າທ່ານ
ຢາກມີຊີວິດຊຶ່ງຈະບໍ່ຕາຍ ແລະຈະເຖິງເມືອງຊັ້ນຟ້ານັ້ນທ່ານ
ຕ້ອງທຳດັ່ງນີ້ :

໑. ຕ້ອງປະໃຈເກົ່າເອົາໃຈໃຫມ່ ຫມາຍຄວາມວ່າ
ເມື່ອທ່ານຮູ້ສຶກເປັນຄົນບາບ ຈົ່ງຍອມສະລະພາບບາບຂອງ
ທ່ານຕໍ່ພຣະເຈົ້າແລະຕັດສິນໃຈຢ່າງເດັດຂາດຕິດຕາມ ພຣະ
ເຈົ້າໄປ.

໒. ຕ້ອງວາງໃຈເຊື່ອໃນພຣະເຢຊູ ຫມາຍຄວາມວ່າ
ທ່ານເຊື່ອພຣະເຢຊູ ຊຶ່ງເປັນພຣະບຸດຂອງພຣະເຈົ້າແລະຊົງ
ຮັບຄວາມຕາຍແທນທ່ານເທິງໄມ້ກາງແຂນ ໂລຫິດຂອງພຣະ
ອົງນັ້ນ ກໍສັກສິດເພື່ອລົບລ້າງບາບກັມ ຊຶ່ງທ່ານໄດ້ມີຢູ່ໃຫ້
ຫມົດສິ້ນໄປ.

໓. <u>ຕ້ອງປະຕິບັດຕາມຄຳສັ່ງຂອງພຣະອົງ</u> ຕາມທີ່ຂຽນໄວ້ໃນພຣະຄຣິສຕະທັມຄຳພີແລະຖືພຣະເຢຊູ ເປັນພຣະເຈົ້າອົງຊົງໂຜດໃຫ້ພົ້ນຈາກການເປັນບາບຂ້ອງທ່ານແລ້ວອ່ານພຼະຄຳພີທຸກວັນເໝືອນເປັນອາຫານອັນປະເສີດດ້ານຈິດວິນຍານຊຶ່ງລູກຂອງພຣະອົງຕ້ອງການອ່ານຢູ່ສເມີ ເພື່ອໃຫ້ເຈຣີນຂຶ້ນໃນດ້ານຄວາມເຊື່ອຖືໃນພຣະເຈົ້າ.

## ຄວາມຫວັງຂອງຊາວຄຣິສຕຽນ

ຜູ້ທີ່ເຊື່ອຖືພຣະເຢຊູຢ່າງແທ້ຈິງເຂົາກໍຮູ້ສຶກວ່າໄດ້ກາຍໄປເປັນລູກຂອງພຣະເຈົ້າແລ້ວ ເຂົາມີຄວາມເຊື່ອອັນແນ່ໃຈວ່າ ພຣະເຢຊູຍັງຈະສເດັດກັບມາເປັນຄັ້ງທີສອງ ເພື່ອໂຮມເອົາລູກຂອງພຣະອົງທົ່ວໂລກ ໄປສວັນຊັ້ນຟ້ານຳພຣະອົງ ນີ້ແຫຼະຄືຄວາມຫວັງອັນແນ່ໃຈແຫ່ງຊາວຄຣິສຕຽນ.

ທ່ານຜູ້ອ່ານຫາກສົນໃຈເຣື່ອງຂ່າວປະເສີດຂອງ ພຣະເຢຊູ ໃຫ້ທ່ານຕິດຕໍ່ຕາມຊື່ທີ່ຂຽນໄວ້ຢູ່ລຸ່ມນີ້ ຖ້າທ່ານຕ້ອງການຢາກໄດ້ ພຣະຄຳພີເພື່ອສຳຣຽນຮັບຮູ້ຕໍ່ໄປ ກໍຈະຍິນດີສົ່ງໄປໃຫ້ແກ່ທ່ານ ./.

ຈົບ

| | |
|---|---|
| THAILAND | O.M.F. 135 Pan Road, Bangkok 5 |
| U. S. A. | Mr Frank Gray, FEBC,<br>P.O. Box 1, Whittier, CA 90608 |
| FRANCE | Centre Inter-Mission CAMA,<br>42, Rue Emile Landrin,<br>Boulogne s/Seine, 92.100<br>Tel. 950.4099 |
| | Mr H. Christen,<br>Service Missionnaire Evangelique<br>25, Rue Pélisson,<br>69100 VILLEURBANNE |

